ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ
*******

ທະນາຄານແຫ່ງ ສ.ປ.ປ.ລາວ

ເລກທີ 135/ທຫລ

ນະຄອນຫຼວງວຽງຈັນ, ວັນທີ 20 MAR 2007

# ຂໍ້ຕົກລົງ
## ກ່ຽວກັບຄວາມພຽງພໍຂອງທຶນ ສຳລັບທະນາຄານທຸລະກິດ

- ອີງຕາມກົດໝາຍ ວ່າດ້ວຍທະນາຄານ ແຫ່ງ ສປປ ລາວ ສະບັບເລກທີ 05/ສພຊ, ລົງວັນທີ 14 ຕຸລາ 1999.
- ອີງຕາມກົດໝາຍ ວ່າດ້ວຍວິສາຫະກິດ ສະບັບເລກທີ 11/ສພຊ, ລົງວັນທີ 09 ພະຈິກ 2005.
- ອີງຕາມລັດຖະບັນຍັດ ວ່າດ້ວຍທະນາຄານທຸລະກິດ ສະບັບເລກທີ 02/ສປປ, ລົງວັນທີ 22 ມີນາ 2000.
- ອີງຕາມການສະເໜີ ຂອງກົມຄຸ້ມຄອງທະນາຄານທຸລະກິດ ແລະ ສະຖາບັນການເງິນ.

**ຜູ້ວ່າການທະນາຄານ ແຫ່ງ ສປປ ລາວ ອອກຂໍ້ຕົກລົງ:**

ມາດຕາ 1. **ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດກ່ຽວກັບການຮັກສາຄວາມພຽງພໍຂອງທຶນ ສຳລັບທະນາຄານທຸລະກິດ ທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງທະນາຄານ ແຫ່ງ ສປປ ລາວ ໃຫ້ມີທຶນຢ່າງພຽງພໍ ໃນການດຳເນີນທຸລະກິດ ເພື່ອຮັກສາຄວາມໝັ້ນຄົງຂອງທະນາຄານທຸລະກິດ.

ມາດຕາ 2. **ທຶນຂອງທະນາຄານທຸລະກິດ**

ທຶນຂອງທະນາຄານທຸລະກິດປະກອບດ້ວຍ ທຶນຊັ້ນ I ແລະ ທຶນຊັ້ນ II, ໃນນັ້ນ:

- ທຶນຊັ້ນ I ແມ່ນທຶນຕົ້ນຕໍ ທີ່ບໍ່ສາມາດຖອນໄດ້ ເມື່ອທະນາຄານທຸລະກິດຍັງດຳເນີນທຸລະກິດຢູ່, ຍົກເວັ້ນທະນາຄານດັ່ງກ່າວ ຫາກຢຸດເຊົາການດຳເນີນທຸລະກິດຂອງຕົນ.
- ທຶນຊັ້ນ II ແມ່ນທຶນເພີ່ມເຕີມ ທີ່ສາມາດປ່ຽນແປງ ແລະ ຖອນໄດ້.

ລາຍລະອຽດຂອງທຶນຊັ້ນ I ແລະ ທຶນຊັ້ນ II ແມ່ນໄດ້ກຳນົດໄວ້ຢູ່ໃນບົດແນະນຳ ກ່ຽວກັບການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້.

**ມາດຕາ 3. ອັດຕາສ່ວນຄວາມພຽງພໍຂອງທຶນ**

ທະນາຄານທຸລະກິດ ຕ້ອງຮັກສາຄວາມພຽງພໍຂອງທຶນທັງໝົດ ບໍ່ໃຫ້ຕ່ຳກວ່າ 8% ຂອງຊັບສິນທີ່ມີນ້ຳໜັກຄວາມສ່ຽງ, ໃນນັ້ນ ທຶນຊັ້ນ I ບໍ່ໃຫ້ຕ່ຳກວ່າ 5% ຂອງຊັບສິນທີ່ມີນ້ຳໜັກຄວາມສ່ຽງ.

**ມາດຕາ 4. ການຄິດໄລ່ອັດຕາສ່ວນຄວາມພຽງພໍຂອງທຶນ**

ໃຫ້ທະນາຄານທຸລະກິດ ປະຕິບັດການຄິດໄລ່ອັດຕາສ່ວນຄວາມພຽງພໍຂອງທຶນ ດັ່ງທີ່ໄດ້ ກຳນົດໄວ້ໃນມາດຕາ 3 ຂອງຂໍ້ຕົກລົງສະບັບນີ້ ຕາມວິທີການດັ່ງນີ້:

4.1 ໃຫ້ລວມເອົາທຸກລາຍການຂອງທຶນຊັ້ນ I ແລະ ທຶນຊັ້ນ II ໂດຍເອົາຈາກໃບສະຫຼຸບຊັບສົມບັດເບື້ອງໜີ້ສິນໃນໝວດທຶນ ຕາມມູນຄ່າຕົວຈິງຂອງບັນຊີໃນມື້ເຮັດລາຍງານ ມາເປັນຕົວຕັ້ງຫານຂອງສູດ.

4.2 ໃຫ້ເອົາແຕ່ລະລາຍການເບື້ອງຊັບສິນໃນໃບສະຫຼຸບຊັບສົມບັດ ຄູນໃຫ້ນ້ຳໜັກຄວາມສ່ຽງຂອງຊັບສິນແຕ່ລະປະເພດ. ສຳລັບແຕ່ລະລາຍການນອກໃບສະຫລຸບຊັບສົມບັດ ແມ່ນໃຫ້ຄູນດ້ວຍຕົວປ່ຽນສິນເຊື່ອ ແລ້ວຄູນໃຫ້ ນ້ຳໜັກຄວາມສ່ຽງຂອງຊັບສິນແຕ່ລະປະເພດ.
ນ້ຳໜັກຄວາມສ່ຽງ ແລະ ຕົວປ່ຽນສິນເຊື່ອ ແມ່ນໄດ້ກຳນົດໄວ້ໃນບົດແນະນຳ ກ່ຽວກັບການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້.

4.3 ໃຫ້ລວມເອົາຜົນຄູນໃນຂໍ້ 4.2 ຂ້າງເທິງມາເປັນຕົວຫານ, ຜົນທີ່ໄດ້ຈາກການຄິດໄລ່ ບໍ່ໃຫ້ຕ່ຳກວ່າອັດຕາສ່ວນທີ່ໄດ້ກຳນົດໄວ້ໃນມາດຕາ 3 ຂອງຂໍ້ຕົກລົງສະບັບນີ້.

**ມາດຕາ 5. ການລາຍງານ**

ທະນາຄານທຸລະກິດ ມີໜ້າທີ່ລາຍງານ ກ່ຽວກັບການຮັກສາອັດຕາສ່ວນຄວາມພຽງພໍຂອງທຶນໃຫ້ກົມຄຸ້ມຄອງທະນາຄານທຸລະກິດ ແລະ ສະຖາບັນການເງິນ ທະນາຄານ ແຫ່ງ ສປປ ລາວ ໃນແຕ່ລະເດືອນ ຫຼື ຕາມຄວາມຮຽກຮ້ອງຕ້ອງການຂອງກົມດັ່ງກ່າວ.

ການລາຍງານຂອງທະນາຄານທຸລະກິດ ໃຫ້ປະຕິບັດຕາມແບບລາຍງານ ທີ່ທະນາຄານ ແຫ່ງ ສປປ ລາວ ໄດ້ກຳນົດໄວ້ໃຫ້.

**ມາດຕາ 6. ມາດຕະການຕໍ່ຜູ້ລະເມີດ**

ທະນາຄານທຸລະກິດ ທີ່ໄດ້ລະເມີດຂໍ້ຕົກລົງສະບັບນີ້ ຈະຕ້ອງຖືກປະຕິບັດມາດຕະການ ຕາມທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງ ກ່ຽວກັບການຮັກສາອັດຕາສ່ວນທາງການເງິນຂອງທະນາຄານທຸລະກິດ.

**ມາດຕາ 7. ການຈັດຕັ້ງປະຕິບັດ**

ມອບໃຫ້ກົມຄຸ້ມຄອງທະນາຄານທຸລະກິດ ແລະ ສະຖາບັນການເງິນ ທະນາຄານ ແຫ່ງ ສປປ ລາວ ອອກບົດແນະນຳ ແລະ ກວດກາ ກ່ຽວກັບການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

ມາດຕາ 8. **ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ ແລະ ໃຊ້ປ່ຽນແທນຂໍ້ກໍານົດສະບັບເລກທີ 01/ທຫລ ລົງວັນທີ 28 ສິງຫາ 2001. ບັນດາຂໍ້ກໍານົດ, ກົດລະບຽບ ແລະ ແຈ້ງການຕ່າງໆ ທີ່ໄດ້ປະກາດໃຊ້ໃນເມື່ອກ່ອນ ຫາກຂັດກັບຂໍ້ຕົກລົງສະບັບນີ້ ລ້ວນແຕ່ຖືກຍົກເລີກ.

**ຜູ້ວ່າການທະນາຄານ ແຫ່ງ ສປປ ລາວ**




**ພູເພັດ ຄໍາພູນວົງ**